Lao - ຄຳສັນຍາ ການອະທິຖານ ພຣະຄຳພີ - Promises Scriptures

ປະຖົມການ 20:6 ພຣະເຈົ້າໄດ້ຊົງຕອບໃນພຣະສຸບິນແກ່ກະສັດວ່າ, “ຖືກແລ້ວ ເຮົາກໍຮູ້ເຈົ້າ ໄດ້ກະທຳດ້ວຍຄວາມບໍ່ຮິສຸດໃຈ ດັ່ງນີ້ແຫລະ ເຮົາຈຶ່ງຮັກສາເຈົ້າໄວ້ບໍ່ໃຫ້ກະທຳຜິດຕໍ່ເຮົາ ດ້ວຍການແຕະຕ້ອງນາງ

ອົບພະຍົກ 35:21,26 ທຸກຄົນທີ່ມີໃຈສັດທາ ແລະທີ່ມີໃຈອາສາສມັກກໍນຳສິ່ງຂອງມາຖວາຍ ພຣະຜູ້ເປັນເຈົ້າສຳລັບຫໍເຕັນນັດພົບ ແລະການບົວລະບັດຕ່າງໆ ແລະສຳລັບເຄື່ອງຍົດບໍ ຣິສຸດ 26 ຝ່າຍບັນດາຜູ້ຍິງທີ່ໃຈສັດທາກໍປັ່ນຂົນແບ້ດ້ວຍຄວາມຊຳນານ

ຈົດບັນຊີ 10:35 ເມື່ອຫີບຍົກອອກເດີນເມື່ອໃດ ໂມເຊກາບທູນວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງລຸກຂຶ້ນເຖີດ ໃຫ້ສັດຕຣູທັງຫລາຍຂອງພຣະອົງກະຈັດກະຈາຍໄປ ໃຫ້ຜູ້ທີ່ຊັງພຣະອົງ ຫລີກຫນີພຣະອົງໄປ”

ພຣະບັນຍັດສອງ 2:25 ຕັ້ງແຕ່ມື້ນີ້ໄປເຮົາຈະໃຫ້ຊົນຊາດທັງຫລາຍທົ່ວໃຕ້ຟ້າເກງຂາມຕໍ່ ພວກເຈົ້າແລະຢ້ານເຈົ້າ ຄົນປະເທດຜູ້ໄດ້ຍິນຂ່າວເຣື່ອງເຈົ້າຈະຢ້ານຕົວສັ່ນ ແລະມີຄວາມ ຣະທົມເພາະເຈົ້າ”

ພຣະບັນຍັດສອງ 9:3 ແຕ່ບັດນີ້ ທ່ານຈະເຫັນດ້ວຍຕົວທ່ານເອງວ່າ ພຣະຜູ້ເປັນເຈົ້າຈະນຳ ຫນ້າພວກທ່ານໄປເຫມືອນໄຟເພື່ອເຜົາຜານ ຈະຊົງໃຫ້ພວກເຂົາເສັ່ງໄຊຕໍ່ພວກທ່ານ ແລະພວກເຂົາຈະຖືກພວກທ່ານຂັບໄລ່ພວກເຂົາອອກໄປ ແລະສ້າງຄວາມຈິບຫາຍໃຫ້ ແກ່ເຂົາຕາມດັ່ງພຣະອົງທີ່ໄດ້ຊົງສັນຍາໄວ້

ໂຍຊວຍ 2:9 ແລະເວົ້າວ່າ, “ຂ້ານ້ອຍຮູ້ວ່າພຣະຜູ້ເປັນເຈົ້າຊົງປະທານແຜ່ນດິນນີ້ໃຫ້ແກ່ພວກ ທ່ານ ແລະຂ້ານ້ອຍຍອມຮັບວ່າ ພວກຂ້ານ້ອຍທຸກຄົນຢ້ານພວກທ່ານຫລາຍ ແລະຄົນ ທົ່ວທຸກອານາເຂດກໍເກີດຄວາມຢ້ານຕົກໃຈຕໍ່ຫນ້າພວກທ່ານ

1 ຊາມູເອນ 17:48,50 ສ່ວນໂກລີອາດກໍຍ່າງມຸ່ງຫນ້າເຂົ້າມາຫາດາວິດອີກ ດາວິດກໍແລ່ນ ເຂົ້າໄປໃນເສັ້ນທາງສະຫນາມຮົບຂອງຊາວຟີລິສຕິນເພື່ອຕໍ່ສູ້ກັບເຂົາຢ່າງວ່ອງໄວ 50 ດາ ວິດໄດ້ຊະນະ ແລະຂ້າໂກລີອາດດ້ວຍກະຖຸນ ແລະກ້ອນຫີນພຽງກ້ອນດຽວໂດຍບໍ່ໄດ້ໃຊ້ ດາບ

ເອັສເທີ 8:17 ທຸກມົນທົນທຸກເມືອງ ບ່ອ່າບ່ອນໃດທີ່ພຣະບັນຊາຂອງພຣະຣາຊາແລະປະກາດ ຂອງພຣະອົງມາເຖິງ ກໍມີຄວາມຍິນດີແລະຄວາມຊື່ນບານຖ້ວມກາງພວກຍິວ ມີການລ້ຽງ ແລະວັນລື້ນເຮີງ ຄົນເປັນຈຳນວນຫລວງຫລາຍມາຈາກຊົນຊາດຂອງປະເທດກໍປະກາດ ຕົວເປັນພວກຍິວ ເພາະຄວາມຢ້ານພວກຍິວມາຄອບງຳເຂົາ

ໂຢບ 29:14 ຂ້າພະເຈົ້າສວມຄວາມຊອບທັມ ແລະມັນກໍຫໍ່ຫຸ້ມຂ້າພະເຈົ້າໄວ້ ຄວາມຍຸດຕິທັມ ຂອງຂ້າພະເຈົ້າເຫມືອນເສື້ອຄຸມ ແລະຜ້າປົກສີສະ

ສຸພາສິດ 13:11 ຊັບສົມບັດທີ່ເຈົ້າຫາມາໄດ້ດ້ວຍວິທີງ່າຍໆນັ້ນ ບໍ່ເຫັນມັນກໍຈະສູນເສັຍຫມົດ ແຕ່ຊັບທີ່ໄດ້ມາດ້ວຍເຫື່ອແຮງຂອງເຈົ້າຈະພາໃຫ້ເຈົ້າຈະເຣີນຂຶ້ນ

ສຸພາສິດ 13:22 ຄົນດີປະມໍຣະດົກໄວ້ໃຫ້ແກ່ຫລານໆ ແຕ່ຊັບສົມບັດຂອງຄົນບາບນັ້ນສະສົມ ໄວ້ໃຫ້ຄົນຊອບທັມ

ສຸພາສິດ 22:22,23 ຢ່າບຸ້ນຄົນຍາກຈົນ ເພາະເຂົາເປັນຄົນຍາກຈົນ ຫລືບີບຄັ້ນຄົນທຸກໃຈທີ່ ປະຕູເມືອງ 23 ເພາະວ່າພຣະຜູ້ເປັນເຈົ້າຈະຊົງວ່າຄວາມແທນເຂົາ ແລະຂົ່ມຂູ່ເອົາຊີວິດ ຂອງຜູ້ທີ່ຂົ່ມຂູ່ເຂົາ

ເອຊາຢາ 35:8 ແລະຈະມີທາງຫລວງຢູ່ທີ່ນັ້ນ ແລະເຂົາຈະເອີ້ນທາງນັ້ນວ່າ “ທາງບໍຣິສຸດ” ຄົນ ບາບແລະຄົນໂງ່ຈະເດີນທາງນັ້ນບໍ່ໄດ້

ເອຊາຢາ 43:2 ເມື່ອເຈົ້າຜ່ານໄຟ ຫລືລວຍນ້ຳເລິກ ເຮົາກໍຈະຢູ່ນຳເຈົ້າ ເຈົ້າຈຶ່ງຈະຜ່ານພົ້ນ ຄວາມຍາກລຳບາກໄປໄດ້ ເມື່ອເຈົ້າຍ່າງຜ່ານໄຟໄປ ມັນຈະບໍ່ໄຫມ້ເຈົ້າ ເຈົ້າຈະຜ່ານຜ່າ ຄວາມຫຍຸ້ງຍາກເຫລົ່ານີ້ໄປໄດ້

ເອຊາຢາ 49:25 ພຣະຜູ້ເປັນເຈົ້າຊົງຕອບວ່າ, “ການນີ້ຈະເກີດຂຶ້ນແນ່ນອນ ຄືພວກຊະເລີຍທີ່ ທະຫານຈັບມາກໍຈະຖືກເອົາໄປ ແລະສິ່ງຂອງທີ່ຜູ້ກົດຂີ່ຍາດຊິງມາກໍຈະຖືກຍຶດໄປ ເຮົາຈະ ຕໍ່ສູ້ຜູ້ທີ່ຕໍ່ສູ້ເຈົ້າ ແລະຈະຊ່ວຍລູກຂອງເຈົ້າໃຫ້ພົ້ນ

ເອຊາຢາ 54:17 ແຕ່ອາວຸດທີ່ສ້າງຂຶ້ນຈະບໍ່ສາມາດທຳລາຍເຈົ້າ ເຈົ້າຈະຕອບໂຕ້ທຸກຄົນທີ່ ຟ້ອງຮ້ອງເຈົ້າ ເຮົາຈະຄຸ້ມຄອງຂ້າໃຊ້ຂອງເຮົາ ແລະຈະໃຫ້ເຂົາມີຄວາມອຸດົມສົມບູນ ພຣະ ຜູ້ເປັນເຈົ້າຊົງກ່າວດັ່ງນີ້ແຫລະ

ເອຊາຢາ 59:17,19 ພຣະອົງຊົງສວມຄວາມຊອບທັມດັ່ງສວມເສື້ອຫຸ້ມເກາະ ແລະພຣະມາລາ

ແຫ່ງຄວາມວອດຢູ່ເຫນືອພຣະສຽນຂອງພຣະອົງ ພຣະອົງຊົງສວມສວອງພຣະອົງແຫ່ງ
ການແກ້ແຄ້ນເປັນຂອງຄຸມພຣະກາຍ ແລະເອົາຄວາມກະຕືຣືລົ້ນຫົ່ມພຣະອົງ 19 ເຂົາຈຶ່ງ
ຍ່ຳເກງພຣະນາມພຣະຜູ້ເປັນເຈົ້າຈາກຕາເວັນຕົກ ແລະພຣະກຽດຂອງພຣະອົງຈາກທີ່
ຕາເວັນຂຶ້ນ ເພາະພຣະອົງຈະສະເດັດມາຢ່າງແມ່ນ້ຳໄຫລເຊາະ

ເອຊາຢາ 61:10 ຂ້າພະເຈົ້າຈະຍິນດີຢ່າງຍິ່ງໃນພຣະຜູ້ເປັນເຈົ້າ ຈິດໃຈຂອງຂ້າພະເຈົ້າຈະວິງ
ໂລດໃນພຣະຜູ້ເປັນເຈົ້າຂອງຂ້າພະເຈົ້າ ເພາະພຣະອົງໄດ້ຊົງສວມຂ້າພະເຈົ້າດ້ວຍເສື້ອຜ້າ
ແຫ່ງຄວາມລອດ ພຣະອົງຊົງຄຸມຂ້າພະເຈົ້າດ້ວຍເສື້ອແຫ່ງຄວາມຊອບທັມເຫມືອນເຈົ້າ
ບ່າວປະດັບຕົວດ້ວຍພວງມາລັຍ ແລະເຫມືອນເຈົ້າສາວຕົກແຕ່ງຕົວດ້ວຍເພັດນິນຈິນ
ດາ

ເອເຊກຽນ 22:30 ເຫດສັນນັ້ນຈົ່ງກ່າວແກ່ເຊື້ອສາຍອິສຣາເອນວ່າພຣະຜູ້ເປັນເຈົ້າກ່າວດັ່ງ
ນີ້ວ່າ ເຈົ້າກະທຳຕົວໃຫ້ມົນທິນໄປຕາມຢ່າງບັນພະບຸຣຸດຂອງເຈົ້າ ແລະຫລິ້ນຊູ້ກັບສິ່ງທີ່
ຫນ້າຂີ້ດຽດຂອງເຂົາຫລື

ເອເຊກຽນ 45:8 ໃຫ້ເປັນສ່ວນຂອງເຈົ້ານາຍໃນອິສຣາເອນ ແລະເຈົ້ານາຍຂອງເຮົາຈະບໍ່ບີບ
ຄັ້ນປະຊາຊົນຂອງເຮົາອີກ ແຕ່ເຈົ້ານາຍເຫລົ່ານັ້ນຈະຍອມໃຫ້ເຊື້ອສາຍອິສຣາເອນໄດ້
ແຜ່ນດິນຕາມສ່ວນເຜົ່າຂອງຕົນ

ດານີເອນ 4:16 ເຂົາຈະບໍ່ມີຈິດໃຈມະນຸດເຫລືອຢູ່ອີກ ຈະມີຈິດໃຈສັດປ່າເປັນເວລາເຈັດປີ

ດານີເອນ 7:4 ຕົວທຳອິດເບິ່ງຄ້າຍຄືສິງ ແລະມີປີກເຫມືອນນົກອີນຊີ ໃນຂນະທີ່ຂ້າພະເຈົ້າ
ເຝົ້າເບິ່ງຢູ່ນັ້ນ ປີກຂອງມັນໄດ້ຖືກດຶງອອກ ສັດໂຕນັ້ນໄດ້ຖືກຍົກຂຶ້ນ ແລະໄດ້ຢືນຢູ່
ເຫມືອນຄົນ ແລ້ວຈິດໃຈຂອງມະນຸດໄດ້ຖືກມອບໃຫ້ມັນ

ເຊຄາຣິຢາ 4:6 ແລ້ວທ່ານຈຶ່ງຕອບຂ້າພະເຈົ້າວ່າ, “ນີ້ເປັນພຣະທັມຂອງພຣະຜູ້ເປັນເຈົ້າທີ່ໃຫ້
ໄວ້ກັບເຊຣຸບບາເບນວ່າ ບໍ່ແມ່ນດ້ວຍກຳລັງ ບໍ່ແມ່ນດ້ວຍຣິດທານຸພາບ ແຕ່ດ້ວຍວິນ
ຍານຂອງເຮົາ ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ແຫລະ

ມັດທາຍ 24:22 ແລະຖ້າວັນທັງຫລາຍນັ້ນບໍ່ໄດ້ຊົງບັນດານໃຫ້ສັ້ນເຂົ້າ ຈະບໍ່ມີມະນຸດຄົນໃດ
ລອດພົ້ນໄດ້ ແຕ່ເພາະເຫັນແກ່ພວກທີ່ຊົງເລືອກໄວ້ນັ້ນ ວັນເຫລົ່ານັ້ນຈຶ່ງໄດ້ຊົງບັນດານ
ໃຫ້ສັ້ນເຂົ້າ

ມັດທາຍ 26:41 ຈົ່ງເຝົ້າລະວັງແລະອ້ອນວອນຢູ່ເພື່ອພວກທ່ານຈະບໍ່ຕົກໃນການທົດລອງ ຈິດໃຈພ້ອມຢູ່ແລ້ວກໍຈິງ ແຕ່ກາຍກໍອ່ອນກຳລັງ"

ມາຣະໂກ 10:48-52 ມີຫລາຍຄົນໄດ້ຫ້າມໃຫ້ມົດຢູ່ ແຕ່ຜູ້ນັ້ນແຮ່ງຮ້ອງດັງຂຶ້ນວ່າ, "ບຸດດາ ວິດເອີຍ, ຂໍຈົ່ງເມດຕາຂ້ານ້ອຍແດ່ທ້ອນ" 49 ພຣະເຍຊູໄດ້ຊົງຢຸດຢືນຢູ່ ແລ້ວຊົງສັ່ງວ່າ, "ຈົ່ງເອີ້ນຄົນນັ້ນມາ" ເຂົາຈຶ່ງເອີ້ນຄົນຕາບອດນັ້ນວ່າ, "ຈົ່ງຊຶ່ນໃຈແລະລຸກຂຶ້ນເທາະ ທ່ານ ກຳລັງເອີ້ນເຈົ້າ" 50 ຄົນຕາບອດນັ້ນກໍຖິ້ມຜ້າຫົ່ມເສັ້ງ ແລ້ວຮີບລຸກຂຶ້ນມາຫາພຣະເຍຊູ 51 ພຣະເຍຊູຊົງຖາມຜູ້ນັ້ນວ່າ, "ເຈົ້າຢາກໃຫ້ເຮົາເຮັດຫຍັງໃຫ້ເຈົ້າ" ຄົນຕາບອດນັ້ນໄດ້ ທູນພຣະອົງວ່າ, "ພຣະອາຈານເອີຍ, ຂໍໂຜດໃຫ້ຂ້ານ້ອຍເຫັນຮຸ່ງແດ່ທ້ອນ" 52 ພຣະເຍຊູ ຊົງບອກຜູ້ນັ້ນວ່າ, "ຈົ່ງໄປເສັ້ງ ຄວາມເຊື່ອຂອງເຈົ້າໄດ້ເຮັດໃຫ້ເຈົ້າດີແລ້ວ" ໃນທັນໃດນັ້ນ ຄົນຕາບອດກໍເຫັນຮຸ່ງແລະໄດ້ເດີນທາງຕາມພຣະອົງໄປ (ມັດທາຍ 20:30-34)

ມາຣະໂກ 16:20 ພວກສາວົກເຫລົ່ານັ້ນຈຶ່ງອອກໄປປະກາດທຸກບ່ອນທຸກທີ່ ແລະອົງພຣະຜູ້ ເປັນເຈົ້າຊົງຮ່ວມງານກັບເຂົາ ແລະຊົງເຮັດໃຫ້ຄຳປະກາດຂອງເຂົາຢືນຢັນໂດຍຫມາຍສຳ ຄັນທີ່ເກີດຂຶ້ນພ້ອມນັ້ນ

ລູກາ 14:23 ແລະນາຍໄດ້ບອກຂ້ອຍໃຊ້ນັ້ນວ່າ, "ຈົ່ງອອກໄປຕາມທາງຫລວງ ແລະ ທາງນ້ອຍນອກເມືອງ ນຳຕົວເຂົາໃຫ້ເຂົ້າມາເພື່ອເຮືອນຂອງເຮົາຈະເຕັມ"

ລູກາ 21:15 ດ້ວຍວ່າຝ່າຍເຮົາຈະປະທານໃຫ້ທ່ານມີຖ້ອຍຄຳ ແລະສະຕິປັນຍາ ຊຶ່ງສັດຕຣູທັງ ຫລາຍຂອງພວກທ່ານຈະຕໍ່ຕ້ານແລະຄັດຄ້ານບໍ່ໄດ້

ລູກາ 21:36 ເຫດສັນນັ້ນຈົ່ງເຝົ້າລະວັງແລະໄຫວ້ວອນຢູ່ທຸກເວລາ ເພື່ອທ່ານຈະມີກຳລັງພົ້ນ ຈາກເຫດການທີ່ຈະບັງເກີດມານັ້ນ ແລະຈະຢືນຢູ່ຕໍ່ຫນ້າບຸດມະນຸດໄດ້"

ໂຍຮັນ 17:15 ຂ້າພຣະອົງບໍ່ໄດ້ຂໍພຣະອົງເອົາເຂົາອອກຈາກໂລກນີ້ ແຕ່ໄດ້ຂໍຮັກສາເຂົາໄວ້ໃຫ້ ພົ້ນຈາກມານຮ້າຍ

ກິຈການ 11:23 ເມື່ອທ່ານໄດ້ມາເຖິງແລ້ວກໍໄດ້ເຫັນພຣະຄຸນທີ່ພຣະເຈົ້າຊົງໂຜດ ກໍປິຕິຍິນດີ ຈຶ່ງໄດ້ຕັກເຕືອນຄົນເຫລົ່ານັ້ນ ໃຫ້ຕັ້ງໃຈຫມັ້ນຄົງຕິດສນິດຢູ່ກັບອົງພຣະຜູ້ເປັນເຈົ້າ

ກິຈການ 13:48 ຝ່າຍຄົນຕ່າງຊາດເມື່ອໄດ້ຍິນດັ່ງນັ້ນແລ້ວກໍມີຄວາມຍິນດີ ແລະໄດ້ສັຣເສີນ ພຣະທັມຂອງພຣະເຈົ້າ ແລະຄົນທັງຫລາຍທີ່ຊົງຫມາຍໄວ້ແລ້ວເພື່ອໃຫ້ໄດ້ຊີວິດອັນ

ຕລອດໄປເປັນນິດກໍໄດ້ວາງໃຈເຊື່ອ

1 ໂກຣິນໂທ 10:13 ບໍ່ມີການທົດລອງອັນໃດເກີດຂຶ້ນກັບເຈົ້າທັງຫລາຍ ນອກຈາກການທົດ ລອງທີ່ເຄີຍເກີດກັບມະນຸດທົ່ວໄປ ພຣະເຈົ້າຊົ່ງທ່ຽງທັມ ພຣະອົ່ງຈະບໍ່ຊົ່ງຍອມໃຫ້ພວກ ເຈົ້າຖືກທົດລອງເກີນກວ່າທີ່ເຈົ້າຈະທົນໄດ້ ແລະເມື່ອຊົ່ງທົດລອງເຈົ້ານັ້ນ ພຣະອົ່ງຈະຊົ່ງ ໂຜດໃຫ້ເຈົ້າມີທາງຫລີກຫນີໄປໄດ້ດ້ວຍ ເພື່ອເຈົ້າທັງຫລາຍຈະສາມາດທົນໄດ້

1 ໂກຣິນໂທ 16:9 ເພາະວ່າທີ່ນີ້ມີປະຕູໄຂໃຫ້ເຮົາຢ່າງກວ້າງຂວາງຫນ້າຈະເກີດຜົນ ທັງຄົນ ຂັດຂວາງກໍມີຈຳນວນຫລວງຫລາຍດ້ວຍ

2 ໂກຣິນໂທ 12:9 ແຕ່ພຣະອົ່ງຊົ່ງກ່າວແກ່ເຮົາວ່າ, “ການທີ່ເຈົ້າມີຄຸນຈາກເຮົາ ກໍພໍສຳລັບ ເຈົ້າແລ້ວ ດ້ວຍວ່າຄວາມ ອ່ອນແອມີຢູ່ທີ່ໃດ ເດດຂອງເຮົາກໍມີຣິດຂຶ້ນເຕັມຂນາດຢູ່ທີ່ ນັ້ນ” ເຫດສັນນັ້ນເຮົາຈົ່ງມີຄວາມພາກພູມໃຈໃນບັນດາຄວາມອ່ອນແອຂອງເຮົາດີກວ່າ ເພື່ອຣິດເດດຂອງພຣະຄຣິດຈະບັງຮົ່ມເຮົາໄວ້

ເອເຟໂຊ 6:11 ຈົ່ງສວມຍຸທພັນຄົບຊຸດຊຶ່ງມາຈາກພຣະເຈົ້າ ເພື່ອທ່ານທັງຫລາຍຈະສາມາດ ຢືນຕ່ໍສູ້ກັບກົນອຸບາຍຂອງພຍາມານໄດ້

ເຮັບເຣີ 1:7,14 ສ່ວນເທວະດາເຫລົ່ານັ້ນພຣະອົ່ງຊົ່ງກ່າວວ່າ, “ພຣະອົ່ງຊົ່ງບັນດານໃຫ້ເທວະ ດາຂອງພຣະອົ່ງເປັນເຫມືອນລົມ ແລະຊົ່ງບັນດານໃຫ້ພວກຜູ້ຮັບໃຊ້ຂອງພຣະອົ່ງເປັນ ເຫມືອນແປວໄຟ” 14 ຜູ້ງເທວະດາທັງປວງນັ້ນ ແມ່ນວິນຍານຮັບໃຊ້ທີ່ພຣະເຈົ້າຊົ່ງໃຊ້ມາ ບົວລະບັດບັນດາຜູ້ທີ່ຈະໄດ້ຮັບຄວາມລອດພົ້ນເປັນມໍຣະດົກ ບໍ່ແມ່ນຫລື

ຢາໂກໂບ 4:7 ເຫດສັນນັ້ນເຈົ້າທັງຫລາຍຈົ່ງນ້ອມໃຈຍອມຟັງພຣະເຈົ້າ ຈົ່ງຕ່ໍສູ້ກັບມານແລະ ມັນຈະຫນີຈາກພວກເຈົ້າໄປ

1 ເປໂຕ 5:10 ແລະເມື່ອທ່ານທັງຫລາຍໄດ້ທົນທຸກຢູ່ຊົ່ວຂນະນຶ່ງແລ້ວ ພຣະເຈົ້າຜູ້ຊົ່ງພຣະ ຄຸນທັງຫມົດ, ຜູ້ໄດ້ຊົ່ງເອີ້ນພວກທ່ານໃຫ້ເຂົ້າໃນສະງ່າຣາສີອັນຕລອດໄປໃນພຣະຄຣິດ ພຣະອົ່ງເອງຈະຊົ່ງໂຜດແປງໃຈພວກທ່ານໃຫ້ຕັ້ງຂຶ້ນໃຫມ່ ແລະຕັ້ງຫມັ້ນຄົ່ງຢູ່ໃຫ້ມີກຳລັງ ຂຶ້ນ ແລະຊົ່ງບັນດານໃຫ້ມີຮາກອັນແຫນ້ນຫນາ